


Issue 3

# Ethical Reporting

Journalism and Media Resources Guidebooks

In collaboration with

Supported by

Ethical Reporting

# ສາລະບານ

ບົດນຳ 04

I. ພາກສະເໜີ: ການສ້າງຄວາມເຊື່ອໝັ້ນ 05

II. ສະພາບການສື່ຂອງລາວ 06

III. ຫຼັກຈັນຍາບັນສຳຄັນ 09

IV. ການຕັດສິນໃຈຢ່າງມີຈັນຍາບັນໃນພາກປະຕິບັດຕົວຈິງ 12

ຖານຂໍ້ມູນກໍລະນີສຶກສາດ້ານຈັນຍາບັນສື່ມວນຊົນຂອງລາວ 14

V. ການເສີມສ້າງວັດທະນະທຳດ້ານຈັນຍາບັນ ຂອງກອງບັນນາທິການ 17

VI. ເຄື່ອງມື ແລະ ຄຳແນະນຳ 18

# ບົດນຳ

## ຄວາມເຊື່ອໝັ້ນ

ຫາກທ່ານສົງໄສວ່າ ຍ້ອນຫຍັງຈຶ່ງມີຄູ່ມືເຫຼັ້ມນີ້?, ຄຳຕອບງ່າຍໆກໍແມ່ນຄວາມເຊື່ອໝັ້ນນັ້ນເອງ.

ສື່ມວນຊົນຈະສາມາດເຮັດວຽກໄດ້ຢ່າງເຕັມທີ່ ກໍຕໍ່ເມື່ອມວນຊົນ ທັງພາກລັດ ແລະ ເອກະຊົນມີຄວາມເຊື່ອໝັ້ນ. ແລ້ວພວກເຮົາຈະສາມາດ ສ້າງຄວາມເຊື່ອໝັ້ນດັ່ງກ່າວແນວໃດ?

ນັ້ນຄືສິ່ງທີ່ພວກເຮົາມຸ່ງໝັ້ນໄຝ່ຝັນຫາ.

ຄູ່ມືເຫຼັ້ມນີ້ ສະໜອງແນວທາງແນະນຳທີ່ເປັນປະໂຫຍດສຳລັບຜູ້ຊ່ຽວ ຊານດ້ານສື່ມວນຊົນ ໃນຂະແໜງອຸດສາຫະກຳຕ່າງໆໃນລາວ.

ມີການລະບຸກ່ຽວກັບຂັ້ນຕອນ, ເຄື່ອງມື ແລະ ສິ່ງທີ່ຄວນພິຈາລະນາສຳຄັນສຳລັບການນຳທາງກ້າວສູ່ພູມມີທັດສື່ ທີ່ກຳລັງປ່ຽນແປງໃນປັດຈຸບັນ ຢ່າງມີຄວາມຮັບຜິດຊອບ ແລະ ມີຈັນຍາບັນ.

ຄູ່ມືເຫຼັ້ມນີ້ມີຈຸດປະສົງເພື່ອສະໜັບສະໜູນຄວາມຖືກຕ້ອງ, ຄວາມປອດໄພ ແລະຄວາມເຂົ້າໃຈກ່ຽວກັບສະພາບການໃນການຜະລິດ ແລະ ລາຍງານຂ່າວໃນລາວ.

# I. ພາກສະເໜີ: ການສ້າງຄວາມເຊື່ອໝັ້ນຜ່ານການລາຍງານຂ່າວຢ່າງກົງໄປກົງມາ

ຄວາມເຊື່ອໝັ້ນ ແມ່ນພື້ນຖານຂອງສື່ທີ່ໜ້າເຊື່ອຖື. ຖ້າຂາດຄວາມເຊື່ອໝັ້ນແລ້ວ, ພະລັງຂອງການສື່ສານມວນຊົນໃນການລາຍງານ,ການຕັ້ງຄຳຖາມ ແລະ ການປ່ຽນແປງສັງຄົມກໍຂາດຫາຍໄປ. ແມ່ນແຕ່ໃນສະພາບການຂອງລາວ, ເຊິ່ງສື່ສ່ວນໃຫຍ່ເປັນຂອງລັດຖະບານ, ແຕ່ຜູ້ເຮັດວຽກດ້ານສື່ກໍຍັງຕ້ອງຮັກສາຈັນຍາບັນຂອງສື່ມວນຊົນຢູ່ຕະຫຼອດເວລາ.

ທຸກຄັ້ງທີ່ມີການເຜີຍແຜ່ຂ່າວ, ທ່ານຄວນເລືອກ:

- ຜູ້ອ່ານເຊື່ອຕໍ່ການລາຍງານຂ່າວຂອງທ່ານ ຫຼື ບໍ່?
- ພາກລັດ ແລະ ເອກະຊົນໃຫ້ຄວາມເຄົາລົບຕໍ່ທ່ານ ຫຼື ບໍ່?
- ວຽກຂອງທ່ານເປັນປະໂຫຍດຕໍ່ສາທາລະນະຊົນ ຫຼື ບໍ່?

ການເລືອກດັ່ງກ່າວມີຄວາມສຳຄັນ. ເຊິ່ງຄູ່ມືເຫຼັ້ມນີ້ຈະຊ່ວຍໃຫ້ນັກຂ່າວລາວມີແນວທາງທີ່ຊັດເຈນ ແລະ ສາມາດຈັ້ງຕັ້ງປະຕິບັດຕົວຈິງໄດ້ໂດຍສະເພາະໃນສ່ວນທີ່ກ່ຽວຂ້ອງກັບຄວາມຖືກຕ້ອງ, ຄວາມໂປ່ງໃສ, ຄວາມເປັນທຳ, ການປົກປ້ອງແຫຼ່ງຂໍ້ມູນ, ແລະ ຄວາມເປັນມືອາຊີບເພື່ອສ້າງ ແລະ ຮັກສາຄວາມເຊື່ອໝັ້ນໄວ້ໃນທຸກເລື່ອງລາວທີ່ລາຍງານ. ໃນປະເທດລາວ, ພູມມີທັດສື່ ຖືກກຳນົດໂດຍການປະສົມປະສານລະຫວ່າງສື່ຂອງພາກລັດ, ພາກເອກະຊົນໜ້າໃໝ່, ແລະ ສະພາບແວດລ້ອມອອນລາຍທີ່ພວມປ່ຽນແປງຢ່າງວ່ອງໄວ, ເຊິ່ງຂ່າວສານ ແລະຂ່າວລືມັກເກີດຂຶ້ນຄຽງຄູ່ກັນ.

ແພລດຟອມ (platform) ສື່ສັງຄົມອອນລາຍ ໄດ້ເປີດພື້ນທີ່ຮອງຮັບສຽງຕ່າງໆຫຼາຍຂຶ້ນ, ແຕ່ກໍເຮັດໃຫ້ຂໍ້ມູນທີ່ບໍ່ໄດ້ຮັບການກວດສອບຄວາມຖືກຕ້ອງ, ການຕັ້ງຫົວຂໍ້ຂ່າວແບບຫຼອກໃຫ້ກົດ (click ຄລິກ), ແລະ ຂໍ້ມູນບິດເບືອນທີ່ຖືກແຜ່ກະຈາຍໄດ້ງ່າຍຂຶ້ນ ກ່ອນທີ່ຄວາມຈິງຈະໄດ້ຮັບການຢືນຢັນ.

ຜົນໄດ້ຮັບແມ່ນຫຍັງ? ຄວາມສົງໄສ ແລະ ຄວາມບໍ່ໜ້າເຊື່ອຖືທີ່ເພີ່ມຫຼາຍຂຶ້ນ.

ຜູ້ຊົມ (ຫຼື ຜູ້ອ່ານ) ໃນປັດຈຸບັນບໍ່ໄດ້ຕັ້ງຄຳຖາມພຽງແຕ່ວ່າ ສິ່ງທີ່ພວກເຂົາອ່ານນັ້ນແມ່ນຫຍັງ, ແຕ່ຍັງຕັ້ງຄຳຖາມອີກວ່າ ຍ້ອນຫຍັງພວກເຂົາຈິ່ງຄວນເຊື່ອໃນສິ່ງທີ່ອ່ານ. ແມ່ນແຕ່ສື່ທີ່ໜ້າເຊື່ອຖື ກໍຍັງມີຄວາມສ່ຽງທີ່ຈະຖືກຕັດສິນແບບເໝົາລວມໄປກັບສື່ທີ່ມີຄຸນນະພາບຕ່ຳ ທ່າມກາງລະບົບນິເວດຂອງຂໍ້ມູນຂ່າວສານ.

• **ຂອບການຄຸ້ມຄອງທີ່ເຂັ້ມງວດ ໝາຍຄວາມວ່າ ນັກຂ່າວຈຳເປັນຕ້ອງໄດ້ລາຍງານຂ່າວພາຍໃນຂອບເຂດທີ່ກຳນົດໄວ້ຢ່າງຊັດເຈນ, ໃນຂະນະດຽວກັນກໍຍັງສຸມໃສ່ຄວາມເປັນທຳ ແລະ ຄວາມຖືກຕ້ອງ.**

• **ການເຂົ້າເຖິງຂໍ້ມູນຢ່າງເປັນທາງການໄດ້ຢ່າງຈຳກັດ ຫຼື ບໍ່ໄດ້ຮັບຂໍ້ມູນທັນຕາມເວລາ** ອາດເຮັດໃຫ້ສື່ບາງແຫ່ງຫັນໄປຄາດເດົາຂ່າວດ້ວຍຕົນເອງ ຫຼື ເພິ່ງພາແຫຼ່ງຂໍ້ມູນອອນລາຍຫຼາຍເກີນໄປ.

• **ແຮງກົດດັນທາງດ້ານເສດຖະກິດ** ເຮັດໃຫ້ອົງກອນສື່ມີຄວາມສ່ຽງຕໍ່ເນື້ອໃນທີ່ໄດ້ຮັບການສະໜັບສະໜູນ ແລະ ອິດທິພົນຈາກຜູ້ລົງໂຄສະນາຫຼາຍຂຶ້ນ, ເຊິ່ງອາດເຮັດໃຫ້ເສັ້ນແບ່ງລະຫວ່າງເນື້ອໃນຂ່າວກັບເນື້ອໃນໂຄສະນາບໍ່ຊັດເຈນ.

**ສິ່ງທີ່ຄູ່ມືເຫຼັ້ມນີ້ຈະສາມາດຊ່ວຍທ່ານໄດ້:**

- ຮັບຮູ້ເຖິງຄວາມສ່ຽງດ້ານຈັນຍາບັນ ກ່ອນທີ່ຈະທຳລາຍຄວາມໜ້າເຊື່ອຖືຂອງທ່ານ. ຮັບມືກັບຂໍ້ມູນ ຈາກແຫຼ່ງຂໍ້ມູນດິຈິຕອນ ແລະ ອອຟລາຍຢ່າງເຂັ້ມງວດ.
- ຕອບສະໜອງຕໍ່ຂ່າວດ່ວນໂດຍບໍ່ບັ່ນທອນຄວາມຖືກຕ້ອງຊັດເຈນ.
- ປົກປ້ອງຕົວທ່ານເອງ ແລະ ເພື່ອນຮ່ວມງານ ໃນສະພາບແວດລ້ອມການລາຍງານຂ່າວທີ່ທ້າທາຍ.
- ສ້າງຄວາມໂປ່ງໃສໃນວັດທະນະທຳກອງບັນນາທິການຂອງທ່ານ ເພື່ອໃຫ້ຜູ້ຊົມຫຼີງເຫັນວິທີການເຮັດວຽກຂອງທ່ານ, ບໍ່ແມ່ນສະເພາະ ສິ່ງທີ່ທ່ານເຜີຍແຜ່ລາຍງານ.

ຄວາມເຊື່ອໝັ້ນບໍ່ໄດ້ຖືກສ້າງຂຶ້ນຈາກການຕັ້ງຫົວຂໍ້ຂ່າວພຽງຢ່າງດຽວ, ແຕ່ສ້າງຂຶ້ນຈາກການຕັດສິນໃຈໃນທຸກໆຄັ້ງ, ການກວດສອບຄວາມຈິງທຸກໆຄັ້ງ ແລະ ການແກ້ໄຂປັບປຸງທຸກໆຄັ້ງເມື່ອເກີດຄວາມຜິດພາດ.

# II. ສະພາບການສື່ຂອງລາວ

## 2.1. ຄວາມເປັນເຈົ້າຂອງ ແລະ ເສລີພາບຂອງສື່

ໃນປະເທດລາວ, ສື່ເກືອບທັງໝົດເປັນຂອງລັດ ແລະ ກິດຈະກຳການລາຍງານຂ່າວທັງໝົດຕ້ອງດຳເນີນການໃຫ້ສອດຄ່ອງຕາມກົດໝາຍລະດັບຊາດ.

ມີຕອນໜຶ່ງທີ່ເວົ້າເຖິງຈັນຍາບັນຂອງນັກສື່ມວນຊົນລາວ ກ່າວວ່າ: "ຈຸດສູງສຸດຂອງສື່ມວນຊົນລາວແມ່ນຮັບໃຊ້ພາລະກິດສ້າງສາ ແລະ ປົກປັກຮັກສາປະເທດລາວ ໃຫ້ມີສັນຕິພາບ ເອກະລາດປະຊາທິປະໄຕ ເອກະພາບ ແລະ ວັດທະນາຖາວອນ ພາຍໃຕ້ການນຳພາຂອງພັກປະຊາຊົນປະຕິວັດລາວ. ບໍ່ວ່າຈະຢູ່ຂົງເຂດໃດ ແລະ ສະພາບແວດລ້ອມໃດ, ນັກຂ່າວຕ້ອງເຄື່ອນໄຫວເພື່ອຈຸດມຸ່ງໝາຍສູງສຸດດັ່ງກ່າວນັ້ນ."

ມາຮອດກາງປີ 2025, ລາວຍັງບໍ່ທັນມີຄະນະກຳມະການຄຸ້ມຄອງດ້ານຈັນຍາບັນສື່ມວນຊົນຢ່າງເປັນທາງການ. ໃນອັນດັບໂລກ, ລາວຖືກຈັດຢູ່ໃນອັນດັບທີ 150 ຈາກ 180 ໃນດັດຊະນີເສລີພາບສື່ມວນຊົນ ປີ 2025, ເຊິ່ງປັບຕົວຂຶ້ນຈາກ 3 ອັນດັບຈາກປີຜ່ານມາ. ສື່ທ້ອງຖິ່ນມີການຂະຫຍາຍຕົວດ້ານຄວາມຍືດຫຍຸ່ນ ແລະ ຄວາມເປີດກວ້າງໃນດ້ານການລາຍງານຂ່າວຢ່າງຕໍ່ເນື່ອງ.

ອີງຕາມກົດໝາຍວ່າດ້ວຍສື່ມວນຊົນ, "ສື່ມວນຊົນແມ່ນເວທີຖະແຫຼງຂ່າວສຳລັບສິດໃນການເຂົ້າເຖິງຂໍ້ມູນຂອງພົນລະເມືອງ. ນັກຂ່າວຕ້ອງມີຄວາມເປັນກາງ, ຊື່ສັດສຸດຈະລິດຕໍ່ພັກ-ລັດ ແລະ ເຄົາລົບຄວາມເປັນຈິງ."

## 2.2. ຄວາມບໍ່ເຕັມໃຈຂອງປະຊາຊົນ

ບັນຫາທ້າທາຍສຳຄັນທີ່ຍັງຄົງຢູ່ນັ້ນກໍແມ່ນ ປະຊາຊົນຫຼາຍຄົນຍັງຂາດຄວາມໝັ້ນໃຈໃນການເປີດເຜີຍຂໍ້ມູນຕໍ່ນັກຂ່າວ, ບໍ່ສະເພາະຫົວຂໍ້ທີ່ລະອຽດອ່ອນເທົ່ານັ້ນ, ແຕ່ຍັງລວມເຖິງປະເດັນໃນຊີວິດປະຈຳວັນ ເຊັ່ນ ການສຶກສາ, ການທ່ອງທ່ຽວ ຫຼື ອາຫານ.

ຄວາມບໍ່ເຕັມໃຈດັ່ງກ່າວນີ້ ສ້າງຄວາມຫຍຸ້ງຍາກໃນການເກັບກຳຂໍ້ມູນທີ່ຖືກຕ້ອງຄົບຖ້ວນ ແລະ ການປະຕິບັດຕາມມາດຕະຖານດ້ານຈັນຍາບັນຂອງສື່ມວນຊົນ.

ໃນການສ້າງຂະແໜງການສື່ມວນຊົນທີ່ເຂັ້ມແຂງ ແລະ ມີຄວາມໜ້າເຊື່ອຖື ຕ້ອງອາໄສຄວາມໂປ່ງໃສ, ຄວາມຮັບຜິດຊອບ ແລະ ຄວາມເຊື່ອໝັ້ນຂອງປະຊາຊົນ.

ສິ່ງດັ່ງກ່າວຈະບັນລຸຜົນສຳເລັດໄດ້ກໍຕໍ່ເມື່ອມີການພົວພັນຮ່ວມມືລະຫວ່າງນັກຂ່າວ, ອົງການຈັດຕັ້ງທາງສັງຄົມ, ໂຮງຮຽນ ແລະ ໜ່ວຍງານພາກລັດ.

ການຮ່ວມມືກັນຈະຊ່ວຍສົ່ງເສີມສະພາບແວດລ້ອມສື່ມວນຊົນ ໃນ ການສະໜັບສະໜູນຜົນປະໂຫຍດຂອງປະຊາຊົນ ແລະ ການພັດທະນາປະເທດຊາດ.

## 2.3. ພູມມິທັດສື່ທີ່ກຳລັງປ່ຽນແປງ

ເຖິງແມ່ນຈະມີຂໍ້ຈຳກັດ, ແຕ່ສະພາບແວດລ້ອມສື່ຂອງລາວກຳລັງໄດ້ຮັບການພັດທະນາຢ່າງຕໍ່ເນື່ອງ. ສື່ມວນຊົນບາງໜ່ວຍງານພວມຈັດຕັ້ງເສີມຂະຫຍາຍຂອບເຂດຂອງພື້ນທີ່ສື່, ໂດຍນຳສະເໜີກ່ຽວກັບບັນຫາສັງຄົມ, ເຫດການໃນທ້ອງຖິ່ນ, ຫຼື ເນື້ອໃນທີ່ຜູ້ຄົນໃຫ້ຄວາມສົນໃຈໄດ້ຢ່າງເປີດເຜີຍຫຼາຍຂຶ້ນ.

ມີຄວາມຫວັງດ້ວຍໃຈອັນຈິດຈໍ່ທີ່ວ່າ ດ້ວຍຫຼັກການປະຕິບັດດ້ານຈັນຍາບັນທີ່ເຂັ້ມແຂງ, ສື່ມວນຊົນສາມາດມີບົດບາດທີ່ມີອິດທິພົນຫຼາຍຂຶ້ນໃນການສຳພາດຊຸມຊົນ ແລະ ການສົນທະນາລະດັບຊາດ. ສະພາບແວດລ້ອມສື່ມວນຊົນລາວ ກຳລັງໄດ້ຮັບການພັດທະນາຢ່າງຊ້າໆ, ເຊິ່ງສ່ວນໃຫຍ່ຂັບເຄື່ອນໂດຍພຶດຕິກຳການບໍລິໂພກຂ່າວສານທີ່ກຳລັງ ປ່ຽນແປງຕາມການເວລາ.

Facebook ກາຍເປັນແຫຼ່ງຂໍ້ມູນຕົ້ນຕໍ, ໂດຍມີທັງການແຈ້ງການຢ່າງ ເປັນທາງການ, ການລາຍງານຂ່າວຈາກລັດຖະບານ, ແລະ ແຈ້ງການສາທາລະນະຊົນ ເຊິ່ງສ່ວນໃຫຍ່ຖືກແບ່ງປັນໂດຍກົງໃນແພລດຟອມ(platform).

ໃນຂະນະດຽວກັນ, TikTok ກໍກຳລັງໄດ້ຮັບຄວາມນິຍົມຢ່າງວ່ອງໄວ, ໂດຍຄອງສ່ວນແບ່ງການເຂົ້າເຖິງສື່ສັງຄົມອອນລາຍໃນລະດັບທີ່ເພີ່ມຂຶ້ນ ແລະ ມີອິດທິພົນຕໍ່ພຶດຕິກຳການບໍລິໂພກຂ່າວສານຂອງຄົນຮຸ່ນໃໝ່.

ການປ່ຽນແປງດັ່ງກ່າວ ຊ່ວຍເປີດໂອກາດກວ້າງຂວາງຂຶ້ນສຳລັບການມີ ສ່ວນຮ່ວມຂອງຜູ້ອ່ານ, ລວມທັງການລາຍງານຂ່າວແບບມັນຕິມີເດຍ(multi media), ວິດີໂອສັ້ນ ແລະ ໂພສ ແບບໂຕ້ຕອບ.

ອົງການສື່ມວນຊົນໃນລາວ ກຳລັງເລີ່ມຕົ້ນທົດລອງນຳໃຊ້ຮູບແບບເຫຼົ່ານີ້, ໂດຍມີຄວາມເຂົ້າໃຈວ່າ ຜູ້ຊົມໃນປັດຈຸບັນ ຕ່າງກໍຄາດ ຫວັງໃຫ້ມີການລາຍງານຂ່າວຢ່າງທັນເວລາ, ເຂົ້າເຖິງໄດ້, ແລະ ມີປະຕິສຳພັນກັນ ຫຼາຍກວ່າຊ່ອງທາງສື່ສິ່ງພິມ ຫຼື ອອກອາກາດແບບເກົ່າ.

## 2.4. ພາບລວມທາງກົດໝາຍ

ກົດໝາຍລາວ ເຮັດໜ້າທີ່ຄຸ້ມຄອງການດຳເນີນງານຂອງສື່ມວນຊົນຢ່າງເຂັ້ມງວດ. ນັກຂ່າວຈຳເປັນຕ້ອງໄດ້ປະຕິບັດຕາມກົດໝາຍຢ່າງຮອບຄອບ, ໂດຍຮັກສາສົມດຸນລະຫວ່າງພັນທະໜ້າທີ່ໃນການລາຍງານຂໍ້ມູນ ກັບຄວາມຈຳເປັນໃນການຫຼີກລ່ຽງການໝິ່ນປະໝາດ, ລວມທັງເນື້ອໃນທີ່ບໍ່ໄດ້ຮັບອະນຸຍາດ ຫຼື ຂໍ້ມູນບິດເບືອນ. ຄູ່ມືເຫຼັ້ມນີ້ ບໍ່ມີຈຸດປະສົງເພື່ອນຳໃຊ້ແທນທີ່ຄຳແນະນຳທາງກົດໝາຍ, ແຕ່ສະໜັບສະໜູນນັກຂ່າວລາວໃນການຕັດສິນໃຈຢ່າງມີຈັນຍາບັນພາຍໃຕ້ຂອບເຂດການຄຸ້ມຄອງທາງກົດໝາຍ.



# III. ຫຼັກຈັນຍາບັນສຳຄັນ

## 3.1. ຄວາມຖືກຕ້ອງ

ຄວາມຖືກຕ້ອງບໍ່ແມ່ນທາງເລືອກ! ແຕ່ເປັນພື້ນຖານຂອງຄວາມໜ້າເຊື່ອຖື.

• **ກວດສອບຄວາມຖືກຕ້ອງ:** ຄວາມຈິງທຸກປະການ ລວມທັງຊື່, ວັນທີ, ຂໍ້ມູນ, ແລະ ຄຳອ້າງອີງ ຄວນໄດ້ຮັບການກວດສອບຈາກແຫຼ່ງຂໍ້ມູນຫຼາຍແຫຼ່ງເທົ່າທີ່ສາມາດເຮັດໄດ້.

• **ການກວດສອບຄວາມຈິງຢ່າງເຂັ້ມງວດ:** ແມ່ນແຕ່ແຫຼ່ງຂໍ້ມູນທີ່ເຊື່ອຖືໄດ້ກໍອາດມີຄວາມຜິດພາດໄດ້. ຄວນໃຊ້ເອກະສານ, ບັນທຶກສາທາລະນະຊົນ, ການສື່ສານໂດຍກົງ, ແລະ ບົດຖະແຫຼງຂ່າວຢ່າງເປັນທາງການເພື່ອຢືນຢັນຄວາມຈິງ.

• **ຍອມຮັບຄວາມຜິດພາດ:** ຄວາມຜິດພາດເກີດຂຶ້ນໄດ້. ເມື່ອເກີດຂຶ້ນແລ້ວກໍຈົ່ງຍອມຮັບຄວາມຜິດພາດນັ້ນດ້ວຍ ຄວາມຊື່ສັດ ແລະ ແກ້ໄຂໃຫ້ທັນເວລາ ແລະ ຊັດເຈນ.

• **ບໍ່ຄວນຮີບຮ້ອນ:** ຫ້າມຮີບຮ້ອນເຜີຍແຜ່ບົດລາຍງານຂ່າວໂດຍອ້າງອີງໃສ່ສົມມຸດຕິຖານ ຫຼື ຄຳແນະນຳທີ່ຍັງບໍ່ທັນຜ່ານການຢືນຢັນຄວາມຖືກຕ້ອງ. ປ່ອຍໃຫ້ເລື່ອງລາວດຳເນີນຕໍ່ໄປຈົນກວ່າຈະໄດ້ຮັບການຢືນຢັນຄວາມຈິງ.

• **ຊີ້ແຈງກ່ຽວກັບຄວາມບໍ່ແນ່ນອນ:** ຫາກບໍ່ສາມາດກວດສອບຄວາມຖືກຕ້ອງໄດ້ຄົບຖ້ວນ, ກໍຈົ່ງຍອມຮັບຄວາມເປັນຈິງ ໂດຍໃຊ້ຄຳເວົ້າຊີ້ແຈງເຊັ່ນ "ມີລາຍງານວ່າ..." ຫຼື "ອີງຕາມຂໍ້ມູນທີ່ມີຢູ່..." ຈະສ້າງຄວາມເຊື່ອໝັ້ນແກ່ຜູ້ອ່ານໄດ້.

## 3.2. ຄວາມເປັນທຳ & ຄວາມໂປ່ງໃສ

ການປະຕິບັດຢ່າງເປັນທຳ ແລະ ມີຄວາມຊື່ສັດສຸດຈະລິດ ສາມາດສ້າງຄວາມເຄົາລົບຕໍ່ທັງແຫຼ່ງຂ່າວ ແລະ ຜູ້ອ່ານໄດ້.

• **ຫ້າມຫຼອກລວງ:** ຫ້າມຫຼອກລວງ, ປິດເບືອນຄວາມຈິງ, ຫຼື ສ້າງຕົວຕົນປອມ ເພື່ອເຂົ້າເຖິງຂໍ້ມູນ ເພາະຖືວ່າຜິດຈັນຍາບັນ ຍົກເວັ້ນກໍລະນີພິເສດ ແລະ ຕ້ອງໄດ້ຮັບອະນຸຍາດຈາກພະນັກງານອາວຸໂສກ່ອນເທົ່ານັ້ນ.

• **ບໍ່ກົດດັນ:** ຫຼີກເວັ້ນການບີບບັງຄັບ, ຫ້າມສັນຍາວ່າຈະລາຍງານຂ່າວ ຫຼື ຂົ່ມຂູ່ວ່າຈະຖອນຕົວ. ປ່ອຍໃຫ້ຜູ້ຄົນເວົ້າ (ຫຼື ປະຕິເສດ) ໄດ້ຢ່າງອິດສະຫຼະ.

• **ລະບຸຕົວຕົນໃຫ້ຊັດເຈນ:** ລະບຸຕົວຕົນຂອງທ່ານວ່າເປັນນັກຂ່າວຕະຫຼອດເວລາ ເມື່ອດຳເນີນການສຳພາດ ຫຼື ເກັບກຳຂໍ້ມູນ. ຫຼີກເວັ້ນການເປີດເຜີຍສະເພາະໃນກໍລະນີພິເສດ, ແລະ ຕ້ອງໄດ້ຮັບອະນຸຍາດເທົ່ານັ້ນ.

• **ການສັງເກດເຫດການສາທາລະນະຊົນຢ່າງມີຄວາມຮັບຜິດຊອບ:** ລາຍງານເຫດການໃນພື້ນທີ່ສາທາລະນະຊົນຢ່າງເປັນທຳ. ຫ້າມສ້າງຄວາມເຂົ້າໃຈຜິດໂດຍການປິດບັງແຮງຈູງໃຈ ຫຼື ບິດບາດ.

• **ຂໍ້ຍົກເວັ້ນສຳລັບການລາຍງານຂ່າວແບບປິດບັງຕົວຕົນ:** ໃນບາງກໍລະນີທີ່ເກີດຂຶ້ນຂ້ອນຂ້າງຍາກ, ເຊັ່ນການເຮັດຂ່າວສືບສວນ-ສອບສວນແບບປອມຕົວ ການໃຊ້ວິທີຫຼອກລວງອາດຖືວ່າສົມເຫດສົມຜົນໄດ້. ແຕ່ຕ້ອງໄດ້ຮັບການອະນຸມັດ ແລະ ບັນທຶກຈາກກອງບັນນາທິການກ່ອນສະເໝີ.

## 3.3. ຄວາມສົມດຸນ ແລະ ສິດໃນການໂຕ້ຕອບ

ຄວາມຍຸຕິທຳ ແລະ ການລາຍງານຂ່າວ ຮຽກຮ້ອງໃຫ້ຜູ້ຄົນມີໂອກາດສະແດງຄຳຄິດເຫັນໄດ້.

• **ສິດໃນການໂຕ້ຕອບ:** ຫາກມີການລາຍງານຂ່າວກ່ຽວກັບຄຳວິພາກວິຈານ, ການກ່າວຫາ ຫຼື ຜົນສະທ້ອນທາງລົບຂອງບຸກຄົນໃດໜຶ່ງ, ຄວນໃຫ້ໂອກາດໃນການໂຕ້ຕອບຢ່າງເທົ່າທຽມກັນ.

• **ການເຊີນຊວນໃຫ້ຕອບກັບຢ່າງມີຄວາມໝາຍ:** ຄວນໃຫ້ຂໍ້ມູນພື້ນຖານ ແລະ ລາຍລະອຽດພຽງພໍ, ເພື່ອໃຫ້ແຫຼ່ງຂ່າວສາມາດໃຫ້ຄຳຕອບທີ່ມີເນື້ອໃນຕົວຈິງໄດ້, ບໍ່ແມ່ນພຽງແຕ່ປະຕິເສດແບບທົ່ວໄປພຽງຢ່າງດຽວ.

• **ລວມເອົາທຸກມຸມມອງ:** ພະຍາຍາມສ້າງມຸມມອງໃຫ້ເປັນກາງ: ແຫຼ່ງຂໍ້ມູນ, ພະຍານ, ຜູ້ຊ່ຽວຊານ, ຂໍ້ມູນຢ່າງເປັນທາງການ, ແລະ ສຽງຄັດຄ້ານ.

• **ດຳເນີນການຕໍ່ເຖິງແມ່ນຈະບໍ່ມີການຕອບກັບ:** ຫາກບຸກຄົນໃດປະຕິເສດທີ່ຈະສະແດງຄຳຄິດເຫັນ, ໃຫ້ສືບຕໍ່ລາຍງານຂ່າວຢ່າງຍຸຕິທຳ. ຄວນອະທິບາຍວ່າມີການຕິດຕໍ່ເຂົ້າມາແຕ່ບໍ່ໄດ້ຕອບກັບ.

## 3.4. ການໃຫ້ຄວາມໜ້າເຊື່ອຖືແຫຼ່ງທີ່ມາ ແລະ ຄວາມເປັນຕົ້ນສະບັບ

ການໃຫ້ຄວາມໜ້າເຊື່ອຖືຢ່າງເໝາະສົມ ຊ່ວຍສ້າງຄວາມໜ້າເຊື່ອຖື, ແລະ ຊ່ວຍຫຼີກເວັ້ນຄວາມຜິດພາດດ້ານຈັນຍາບັນໄດ້.

• **ກ່າວຄຳຂອບໃຈຕໍ່ຜູ້ອື່ນ:** ອ້າງອີງສື່ສິ່ງພິມ, ນັກຄົ້ນຄວ້າ, ຫຼື ນັກຂ່າວ ເມື່ອມີການອ້າງອີງຜົນງານຂອງພວກເຂົາ.

ເຊັ່ນ: *"ອີງຕາມການລາຍງານຂອງໜັງສືພິມວຽງຈັນທາຍໃນວັນທີ..."*

• **ລະບຸແຫຼ່ງຂໍ້ມູນທີ່ຍັງບໍ່ໄດ້ຮັບການຢືນຢັນຄວາມຖືກຕ້ອງ:** ຫາກແບ່ງປັນຂໍ້ມູນຈາກແຫຼ່ງອື່ນ, ໃຫ້ລະບຸແຫຼ່ງທີ່ມາຢ່າງຊັດເຈນ.

• **ຮັກສາການລະບຸແຫຼ່ງທີ່ມາສຳລັບຂ່າວ ແລະ ຂໍ້ມູນ:** ເຖິງແມ່ນຈະມີການກວດສອບຄວາມຄືບໜ້າທີ່ສຳຄັນແລ້ວກໍຕາມ, ຄວນໃຫ້ຄວາມໜ້າເຊື່ອຖືແກ່ແຫຼ່ງຂໍ້ມູນທີ່ເປີດເຜີຍເນື້ອໃນຂ່າວກ່ອນ.

• **ຫຼີກເວັ້ນການກັອບປີ້ຜົນງານ:** ຫ້າມລອກແບບ (copy ກັອບປີ້), ຄວນຖອດຄວາມ ແລະ ອ້າງອີງແຫຼ່ງຂໍ້ມູນເປັນປະຈຳ. ໃຊ້ຄຳອ້າງອີງທີ່ສັ້ນກະທັດຮັດ ແລະ ຊັດເຈນ.

• **ຈັດເກັບຂໍ້ມູນຖາວອນ ແລະ ນຳກັບມາໃຊ້ຄືນໃໝ່ຢ່າງລະມັດລະວັງ:** ນຳເອົາເນື້ອໃນເກົ່າມາໃຊ້ຄືນໃໝ່ໃນກໍລະນີຈຳເປັນ. ໂດຍຂຽນໃໝ່ ແລະ ອັບເດດໃຫ້ທັນເຫດການຢູ່ຕະຫຼອດເວລາ.

## 3.5. ແຫຼ່ງຂໍ້ມູນ ແລະ ການເກັບຮັກສາບັນທຶກທີ່ຊັດເຈນ

ຜູ້ອ່ານຄວນຮູ້ແຫຼ່ງທີ່ມາຂອງຂໍ້ມູນ, ແລະ ທ່ານຈຳເປັນຕ້ອງມີເອກະສານປະກອບ ເພື່ອຄວາມປອດໄພ ແລະ ມີຄວາມຮັບຜິດຊອບ.

• **ລະບຸແຫຼ່ງຂໍ້ມູນຕາມສະພາບຕົວຈິງ:** ຄວນລະບຸວ່າຂໍ້ມູນໄດ້ມາຈາກການສຳພາດສົດ, ທາງໂທລະສັບ, ອີເມວ, ຖະແຫຼງຂ່າວຢ່າງເປັນທາງການ ຫຼື ເອກະສານ.

• **ເກັບຮັກສາບັນທຶກ:** ຈົດບັນທຶກໂດຍລະອຽດ, ການປະທັບເວລາ, ຄວາມຍິນຍອມ, ສຽງ/ບົດຖອດຄວາມຕົ້ນສະບັບໄວ້ໃນບ່ອນຈັດເກັບຂໍ້ມູນຖາວອນທີ່ປອດໄພ.

• **ຄວາມໂປ່ງໃສກ່ຽວກັບຂໍ້ຈຳກັດ:** ຫາກແຫຼ່ງສະໜອງຂໍ້ມູນຮ້ອງຂໍບໍ່ໃຫ້ເປີດເຜີຍຕົວຕົນ, ຄວນລະບຸໃນລັກສະນະບໍ່ເປີດເຜີຍຕົວຕົນຕໍ່ຜູ້ອ່ານ ເຊັ່ນ: "ເຈົ້າໜ້າທີ່ລະດັບສູງຂອງກະຊວງທ່ານໜຶ່ງ (ບໍ່ປະສົງອອກນາມ) ກ່າວວ່າ..."

• **ກຽມພ້ອມກໍລະນີມີການກວດສອບ:** ຫາກວຽກຂອງທ່ານມີບັນຫາທ້າທາຍ, ຫຼື ປະເຊີນກັບແຮງກົດດັນທາງກົດໝາຍ, ສາມາດໃຊ້ບັນທຶກຢືນຢັນຄວາມຖືກຕ້ອງເປັນເກາະປ້ອງກັນທີ່ເຂັ້ມແຂງທີ່ສຸດໄດ້.

## 3.6. ການປົກປ້ອງຕົວຕົນຂອງແຫຼ່ງຂໍ້ມູນ

ໃນປະເທດລາວ, ການປົກປ້ອງຕົວຕົນຂອງແຫຼ່ງຂໍ້ມູນ ຖືເປັນທັງຈັນຍາບັນ ແລະ ຄວາມສຳຄັນ, ໂດຍພິຈາລະນາຈາກສະພາບການທາງສັງຄົມ ແລະ ການເມືອງແບບສະເພາະ.

- **ບໍ່ເປີດເຜີຍຕົວຕົນເພື່ອຮັກສາຄວາມປອດໄພ:** ອະນຸຍາດສະເພາະກໍລະນີການເປີດເຜີຍຕົວຕົນກໍ່ຫາກໃຫ້ເກີດອັນຕະລາຍ.

- **ການຂໍຄວາມຍິນຍອມ:** ອະທິບາຍກ່ຽວກັບຄວາມສ່ຽງ ແລະ ຂໍອະນຸຍາດກ່ອນຈະບໍ່ເປີດເຜີຍຕົວຕົນ.
- **ການຮັບມືດ້ານຄວາມປອດໄພ:** ເກັບຮັກສາຟາຍສຽງ, ເອກະສານ ແລະ ລາຍລະອຽດແຫຼ່ງຂໍ້ມູນໄວ້ໃນບ່ອນທີ່ມີການເຂົ້າລະຫັດ ແລະ ຈຳກັດການເຂົ້າເຖິງ.

- **ການປະເມີນຄວາມສ່ຽງ:**

  - ຂໍ້ມູນມີຄວາມສ່ຽງທາງການເມືອງ ຫຼື ບໍ່?
  - ບຸກຄົນ ຫຼື ຊຸມຊົນບາງແຫ່ງອາດປະເຊີນກັບຄຳວິພາກວິຈານ ຫຼື ບໍ່?
  - ການເຜີຍແຜ່ເປັນປະໂຫຍດຕໍ່ສາທາລະນະຊົນ ຫຼື ບໍ່?

# IV. ການຕັດສິນໃຈຢ່າງມີຈັນຍາບັນໃນພາກປະຕິບັດຕົວຈິງ

## 4.1. ລາຍການກວດສອບການລາຍງານຂ່າວປະຈຳວັນ

ກ່ອນທີ່ຈະກົດ “ເຜີຍແຜ່,” ຄວນຖາມຕົນເອງວ່າ:

1. ໄດ້ກວດສອບຄວາມຈິງສຳຄັນຈາກແຫຼ່ງຂ່າວຫຼາຍແຫຼ່ງແລ້ວບໍ?
2. ໄດ້ໃຫ້ໂອກາດຜູ້ກ່ຽວຂ້ອງໃນການຕອບກັບ ຫຼື ບໍ່?
3. ມີຜູ້ຮ້ອງຂໍບໍ່ໃຫ້ເປີດເຜີຍຊື່ ຫຼື ຂໍ້ມູນສ່ວນຕົວ ຫຼື ບໍ່, ແລະ ຕົນໄດ້ດຳເນີນການຢ່າງເໝາະສົມແລ້ວບໍ?
4. ວິທີການຮັບຂໍ້ມູນມີຄວາມໂປ່ງໃສ ຫຼື ບໍ່?
5. ໄດ້ໃຫ້ຄວາມໜ້າເຊື່ອຖືຂໍ້ມູນ ແລະ ຊ່ອງທາງອື່ນໆ ຫຼື ບໍ່?

6. ມີອະຄະຕິ ຫຼື ຄວາມຂັດແຍ້ງ ໃດທີ່ຄວນເປີດເຜີຍ ຫຼື ບໍ່?
7. ຂ່າວນີ້ເປັນປະໂຫຍດຕໍ່ສາທາລະນະຊົນ ຫຼື ບໍ່?

ຫາກຄໍາຕອບສໍາລັບຄໍາຖາມເຫຼົ່ານີ້ແມ່ນ "ບໍ່", ຄວນຢຸດກ່ອນແລ້ວປະເມີນຄືນໃໝ່.

## 4.2. ການຮັບມືກັບແຮງກົດດັນທາງການເມືອງ

ບຸກຄົນທີ່ມີອໍານາດອາດພະຍາຍາມໃຊ້ອິດທິພົນຕໍ່ການລາຍງານຂ່າວ.ສື່ມວນຊົນຂອງລັດບາງຄັ້ງຕ້ອງປະເຊີນກັບຂໍ້ຈໍາກັດພາຍໃນດ້ານບັນນາທິການ.

• **ຍຶດໝັ້ນໃນຄວາມຈິງ:** ບໍ່ຄວນປ່ອຍໃຫ້ແຮງກົດດັນມາກໍານົດການລາຍງານຂ່າວ. ຫາກມີຂໍ້ຜິດພາດ, ກໍຫາທາງແກ້ໄຂ.

• **ຂໍຄວາມຊ່ວຍເຫຼືອຈາກບັນນາທິການ:** ຫາກຖືກກົດດັນ, ຄວນຂໍຄວາມຊ່ວຍເຫຼືອຈາກບັນນາທິການອາວຸໂສ. ຫາກຖືກປິດກັ້ນການລາຍງານຂ່າວ, ທີມງານຄວນປະເມີນສະຖານະການດ້ວຍຄວາມຮອບຄອບ.

• **ໃຫ້ຄໍາຊີ້ແຈງທີ່ໂປ່ງໃສ:** ຫາກທ່ານບໍ່ໄດ້ຮັບຄໍາຕອບຈາກຜູ້ມີສິດອໍານາດ, ກໍຄວນຊີ້ແຈງໃຫ້ຊັດເຈນ. ເພາະບັນຫານີ້ແມ່ນ *ຂະບວນການທີ່ຖືກຕ້ອງຕາມຂັ້ນຕອນ.*

• **ໄລຍະທີ່ຄວນປະຕິເສດ:** ຫາກປະເຊີນກັບແຮງກົດດັນໃຫ້ມີການຫ້າມ (censor ເຊັນເຊີ) ຫຼື ລົງໂທດນັກຂ່າວ ຄວນພິຈາລະນາຢ່າງຈິງຈັງວ່າ ບໍ່ເຜີຍແຜ່ບົດຄວາມນັ້ນດີກວ່າ, ເພາະການຕັດສິນໃຈບໍ່ເຜີຍແຜ່ເນື້ອໃນໂດຍເປີດເຜີຍ ຫຼື ໂປ່ງໃສ ຍ່ອມດີກວ່າການເຜີຍແຜ່ເນື້ອໃນພາຍໃຕ້ແຮງກົດດັນ.

## 4.3. ການຮັບມືກັບຫົວຂໍ້ທີ່ລະອຽດອ່ອນ

ນັກຂ່າວອາດຈໍາເປັນຕ້ອງໄດ້ລາຍງານຂ່າວກ່ຽວກັບສາສະໜາ, ເຊື້ອຊາດ, ບົດບາດຍິງ-ຊາຍ, ການເມືອງພາຍໃນ, ຫຼື ບັນຫາໃນພາກພື້ນ.

• **ຄວາມລະອຽດອ່ອນທາງວັດທະນະທໍາ:** ປຶກສາຜູ້ຊ່ຽວຊານໃນທ້ອງຖິ່ນ ເພື່ອຫຼີກເວັ້ນການນໍາໃຊ້ສັນຍະລັກສັກສິດ ຫຼື ສັນຍະລັກທີ່ລະອຽດອ່ອນໃນທາງທີ່ຜິດ.

• **ຄວາມເປັນສ່ວນຕົວ ແລະ ກຽດສັກສີ:** ຫ້າມສະແດງພາບກຣາຟິກຂອງຄວາມຂັດແຍ້ງ, ເດັກນ້ອຍ, ຫຼື ຜູ້ທີ່ກໍາລັງທຸກໃຈ, ຍົກເວັ້ນແຕ່ຢູ່ໃນສະພາບການເໝາະສົມ.

• **ປຶກສາຜູ້ຊ່ຽວຊານ:** ນໍາໃຊ້ສິດທິມະນຸດ, ຜູ້ນໍາທາງສາສະໜາ, ຫຼື ນັກມະນຸດວິທະຍາ ເພື່ອຊ່ວຍຊີ້ແຈງຄໍາອະທິບາຍທີ່ສົມດູນ.

• **ຫຼີກເວັ້ນການໝິ່ນປະໝາດ:** ໃນພື້ນທີ່ສີເທົາທາງກົດໝາຍ, ຄວນສະໜັບສະໜູນຂໍ້ກ່າວຫາດ້ວຍເອກະສານ, ຫຼື ຫຼີກເວັ້ນການເຜີຍແຜ່ຈົນກວ່າຈະໄດ້ຮັບການຢືນຢັນຄວາມຖືກຕ້ອງ.

## 4.4. ການມີສ່ວນຮ່ວມຂອງຜູ້ອ່ານ

ຫ້າມສະແດງອາການເມີນເສີຍຕໍ່ຜູ້ອ່ານ. ເຊີນຊວນໃຫ້ເກີດຄວາມໂປ່ງໃສ:

• **ນະໂຍບາຍການແກ້ໄຂ:** ແຈ້ງໃຫ້ຜູ້ອ່ານຊາບກ່ຽວກັບວິທີການຮັບມືກັບຄວາມຜິດພາດຂອງຕົນ.
• **ການສື່ສານສາທາລະນະຊົນຢ່າງຕໍ່ເນື່ອງ:** ໃຊ້ແພລດຟອມຂອງທ່ານ ທັງອອຟລາຍ ແລະ ອອນລາຍ ເພື່ອຕອບຄຳຖາມ ຫຼື ຈັດເວທີສົນທະນາກ່ຽວກັບຂະບວນການເຮັດວຽກດ້ານສື່ມວນຊົນ, ບັນຫາທ້າທາຍ ແລະ ການຕັດສິນໃຈຕ່າງໆ.

## ຖານຂໍ້ມູນກໍລະນີສຶກສາດ້ານຈັນຍາບັນສື່ມວນຊົນຂອງລາວ

## 1. ການລະບຸຊື່ຜູ້ເຄາະຮ້າຍຈາກອຸບັດເຫດ

### ສະຖານະການ:

ເກີດອຸບັດເຫດລົດສອງແຖວຕຳກັນຢູ່ແຂວງບໍລິຄຳໄຊ ເຮັດໃຫ້ມີຜູ້ໄດ້ຮັບບາດເຈັບຫຼາຍລາຍ. ທ່ານໄດ້ຮັບລາຍຊື່ຈາກເຈົ້າໜ້າທີ່ຕຳຫຼວດ ແລະ ຍາດພີ່ນ້ອງຄົນໜຶ່ງທີ່ໂພສຂໍ້ມູນຕໍ່ສາທາລະນະຊົນໃນ Facebook. ເຊິ່ງຜູ້ເຄາະຮ້າຍບາງລາຍແມ່ນເດັກນ້ອຍ.

**ບັນຫາຂັດແຍ້ງທາງຈັນຍາບັນ:**
ທ່ານຈະເຜີຍແຜ່ຊື່ ແລະ ຮູບພາບທັນທີ ຫຼື ລໍຖ້າການຢືນຢັນຢ່າງເປັນທາງການກ່ອນບໍ?

**ສິ່ງທີ່ຄວນພິຈາລະນາ:**
• ຄວາມເປັນສ່ວນຕົວທຽບກັບຜົນປະໂຫຍດສາທາລະນະຊົນ
• ຄວາມສ່ຽງຂອງຂໍ້ມູນທີ່ຜິດພາດ ຫາກການລາຍງານເບື້ອງຕົ້ນບໍ່ຖືກຕ້ອງ
• ບັນທັດຖານທາງວັດທະນະທຳ ກ່ຽວກັບການເຜີຍແຜ່ໂສກນາດຕະກຳສ່ວນບຸກຄົນ

**ຄຳຖາມສຳລັບການປຶກສາຫາລື:**
• ເມື່ອໃດທີ່ຜົນປະໂຫຍດສາທາລະນະຊົນມີຄວາມສຳຄັນຫຼາຍກວ່າສິດຄວາມເປັນສ່ວນຕົວຂອງຄອບຄົວ?

• ຫາກຄອບຄົວໃດໜຶ່ງເປີດເຜີຍຊື່ຕໍ່ສາທາລະນະຊົນ, ການເຜີຍແຜ່ດັ່ງກ່າວຖືວ່າມີຈັນຍາບັນ ຫຼື ບໍ່?

## 2. ຂໍ້ກ່າວຫາກ່ຽວກັບການສໍ້ລາດບັງຫຼວງຈາກແຫຼ່ງຂ່າວນິລະນາມ

### ສະຖານະການຕົວຢ່າງ:

ມີຜູ້ແຈ້ງເບາະແສທີ່ບໍ່ເປີດເຜີຍຊື່ ໄດ້ສົ່ງເອກະສານມາໃຫ້ທ່ານ ໂດຍອ້າງວ່າມີການຄຸ້ມຄອງບໍລິຫານເງິນທຶນຜິດພາດໃນໂຄງການຂັ້ນເມືອງ. ພວກເຂົາປະຕິເສດທີ່ຈະເປີດເຜີຍຕົວຕົນ ເນື່ອງຈາກຢ້ານເປັນອັນຕະລາຍຈາກການແກ້ແຄ້ນ.

**ບັນຫາຂັດແຍ້ງທາງຈັນຍາບັນ:**
ທ່ານຈະລາຍງານຂ່າວໂດຍໃຊ້ຂໍ້ມູນຈາກແຫຼ່ງທີ່ບໍ່ເປີດເຜີຍຕົວຕົນ, ຫຼືຈະລໍຖ້າຈົນກວ່າສາມາດກວດສອບຄວາມຖືກຕ້ອງໄດ້ດ້ວຍຕົນເອງບໍ?

**ສິ່ງທີ່ຄວນພິຈາລະນາ:**
- ການປົກປ້ອງແຫຼ່ງຂໍ້ມູນ ກັບ ຄວາມສ່ຽງຈາກການລາຍງານຂໍ້ມູນບິດເບືອນ
- ຄວາມຈຳເປັນທີ່ຕ້ອງມີຫຼັກຖານເປັນເອກະສານ ແລະ ການກວດສອບຄືນໃໝ່
- ອັນຕະລາຍທີ່ອາດເກີດຂຶ້ນຕໍ່ຜູ້ຖືກກ່າວຫາ ຫາກບໍ່ໄດ້ຮັບການຢືນຢັນຄວາມຖືກຕ້ອງ

**ຄຳຖາມສຳລັບການປຶກສາຫາລື:**
- ຈະໃຊ້ແຫຼ່ງຂໍ້ມູນ ຫຼື ເອກະສານຈຳນວນເທົ່າໃດຈຶ່ງຈະພຽງພໍກ່ອນການເຜີຍແຜ່?
- ຈະເກີດຫຍັງຂຶ້ນ ຖ້າບໍ່ສາມາດກວດສອບເອກະສານໄດ້ຢ່າງຄົບຖ້ວນ ແຕ່ໃຫ້ປະໂຫຍດສູງຕໍ່ສາທາລະນະຊົນ?

## 3. ຮູບຖ່າຍປະຫວັດສາດຂອງກຸ່ມຕິດອາວຸດສະຖານະການຕົວຢ່າງ:

### ສະຖານະການຕົວຢ່າງ:

ທ່ານກຳລັງລາຍງານຂ່າວຄວາມຂັດແຍ້ງທີ່ເກີດຂຶ້ນໃນໄລຍະ 20 ປີກ່ອນໃນລາວ ແລະ ໃຊ້ຮູບຖ່າຍຂອງກຸ່ມຕິດອາວຸດໃນຄັງຂໍ້ມູນ. ແຕ່ Facebook ໄດ້ລຶບໂພສດັ່ງກ່າວອອກ ເນື່ອງຈາກເປັນການ "ສົ່ງເສີມອົງກອນອັນຕະລາຍ."

**ບັນຫາຂັດແຍ້ງທາງຈັນຍາບັນ:**
ທ່ານຈະເບີພາບ, ຫາຮູບພາບໃໝ່ມາແທນ, ຫຼື ຍື່ນອຸທອນການລຶບເນື້ອໃນນັ້ນບໍ?

**ສິ່ງທີ່ຄວນພິຈາລະນາ:**
- ຄວາມຈຳເປັນທີ່ຈະຕ້ອງມີຄວາມຖືກຕ້ອງທາງປະຫວັດສາດ
- ຫຼີກເວັ້ນການສົ່ງເສີມການໃຊ້ຄວາມຮຸນແຮງໂດຍບໍ່ເຈດຕະນາ
- ການປະຕິບັດຕາມກົດລະບຽບຂອງແພລດຟອມ ໂດຍບໍ່ບິດເບືອນປະຫວັດສາດ

**ຄຳຖາມສຳລັບການປຶກສາຫາລື:**

- ທ່ານຈະຮັກສາບໍລິບົດຂອງເນື້ອໃນໃນຂະນະປະຕິບັດຕາມນະໂຍບາຍສື່ສັງຄົມອອນລາຍໄດ້ແນວໃດ?
- ໃນການລາຍງານຂ່າວກຸ່ມຕິດອາວຸດໃນອະດີດ ກັບ ປັດຈຸບັນຄວນໃຊ້ກົດລະບຽບດຽວກັນບໍ?

# 4.ຂ່າວລືກ່ຽວກັບການອົບພະຍົບຈາກນ້ຳຖ້ວມ

## ສະຖານະການຕົວຢ່າງ:

ໃນລະຫວ່າງຝົນຕົກໜັກຕິດຕໍ່ກັນຫຼາຍວັນ, ປະຊາຊົນໃນທ້ອງຖິ່ນລາຍງານໃນ Facebook ວ່າເຂື່ອນໄຟຟ້າແຂວງໄຊຍະບູລີເກີດການຊຸດໂຊມ ແລະ ກຳລັງຈະແຕກ. ທາງໜ່ວຍງານທີ່ກ່ຽວຂ້ອງກໍໄດ້ອອກມາປະຕິເສດຂ່າວດັ່ງກ່າວ, ແຕ່ຜູ້ສື່ຂ່າວພາກສະໜາມຂອງທ່ານຊ້ຳພັດເຫັນທະຫານກຳລັງລຳລຽງອຸປະກອນມຸ່ງໜ້າໄປຍັງເຂື່ອນດັ່ງກ່າວ.

**▸ ບັນຫາຂັດແຍ້ງທາງຈັນຍາບັນ:**

ທ່ານຈະເຜີຍແຜ່ຂ່າວທີ່ຄາດວ່າ "ອາດເກີດເຫດການສຸກເສີນ" ຫຼື ລໍຖ້າການຢືນຢັນກ່ອນ?

**▸ ສິ່ງທີ່ຄວນພິຈາລະນາ:**

- ກຫຼີກເວັ້ນຄວາມຕື່ນຕົກໃຈ ແທນທີ່ດ້ວຍການແຈ້ງເຕືອນປະຊາຊົນຮັບຮູ້ເຖິງໄພອັນຕະລາຍທີ່ອາດເກີດຂຶ້ນ
- ຄວນກວດສອບຄວາມຖືກຕ້ອງກັບແຫຼ່ງຂໍ້ມູນທີ່ໜ້າເຊື່ອຖືຫຼາຍແຫຼ່ງ
- ຫາກລາຍງານຂ່າວບໍ່ຖືກຕ້ອງ ກໍຈະມີຄວາມສ່ຽງທາງກົດໝາຍ ຫຼື ຊື່ສຽງ

**ຄຳຖາມສຳລັບການປຶກສາຫາລື:**

- ເມື່ອໃດທ່ານຈະຕັດສິນໃຈເຜີຍແຜ່ຂ່າວດ່ວນທີ່ຍັງບໍ່ໄດ້ຮັບການຢືນຢັນ?
- ຈະນຳໃຊ້ຖ້ອຍຄຳເພື່ອຊ່ວຍຫຼຸດຜ່ອນຄວາມຕື່ນຕົກໃຈແນວໃດ ໃນຂະນະດຽວກັນ, ຈະສາມາດລາຍງານເຕືອນປະຊາຊົນໄດ້?

# 5.ຂ່າວໂຄສະນາທີ່ແຝງຕົວເປັນຂ່າວແທ້

## ສະຖານະການຕົວຢ່າງ:

ຜູ້ລົງໂຄສະນາຕ້ອງການໂຄສະນາບົດຄວາມກ່ຽວກັບຜະລິດຕະພັນກະສິກຳໃໝ່ໆ, ແຕ່ຮ້ອງຂໍບໍ່ໃຫ້ເປີດເຜີຍວ່າເປັນ "ຂ່າວໂຄສະນາ." ຜູ້ລົງໂຄສະນາລາຍນີ້ຖືເປັນແຫຼ່ງລາຍຮັບສຳຄັນຂອງກອງບັນນາທິການຂອງທ່ານ.

**▸ ບັນຫາຂັດແຍ້ງທາງຈັນຍາບັນ:**

ທ່ານຈະເຜີຍແຜ່ບົດຄວາມໂດຍບໍ່ເປີດເຜີຍວ່າເປັນຂ່າວໂຄສະນາ, ຫຼືຍອມສ່ຽງຕໍ່ການສູນເສຍລາຍຮັບຈາກໂຄສະນາຫາກລະບຸຄວາມຈິງວ່າເປັນຂ່າວໂຄສະນາ ຫຼື ບໍ່?

**ສິ່ງທີ່ຄວນພິຈາລະນາ:**
- ຄວາມໂປ່ງໃສ ແລະ ຄວາມເຊື່ອໝັ້ນຕໍ່ຜູ້ອ່ານ
- ຄວາມຢູ່ລອດດ້ານການເງິນຂອງກອງບັນນາທິການ
- ແບບຢ່າງທີ່ກຳນົດໄວ້ສຳລັບຂໍ້ຕົກລົງໃນອະນາຄົດ

**ຄຳຖາມສຳລັບການປຶກສາຫາລື:**
- ຄວາມເຊື່ອໝັ້ນຂອງຜູ້ຊົມມີຄ່າກວ່າລາຍຮັບໄລຍະສັ້ນ ຫຼື ບໍ່?
- ກອງບັນນາທິການຂອງທ່ານຄວນກຳນົດມາດຕະຖານການຕິດປ້າຍເຄື່ອງໝາຍ ສຳລັບເນື້ອໃນທີ່ຕ້ອງຈ່າຍເງິນແນວໃດ?

# V. ການເສີມສ້າງວັດທະນະທຳດ້ານຈັນຍາບັນຂອງ ກອງບັນນາທິການ

## 5.1. ຫຼັກຈັນຍາບັນພາຍໃນ

- ກຳນົດນະໂຍບາຍເປັນລາຍລັກອັກສອນ ກ່ຽວກັບມາດຕະຖານການລາຍງານ ແລະ ຂໍ້ຂັດແຍ້ງ ທາງຜົນປະໂຫຍດ.
- ສ້າງລາຍການກວດສອບສະຖານະ ໃຫ້ເປັນມາດຕະຖານສຳລັບການຢືນຢັນຄວາມຖືກຕ້ອງ, ການກວດສອບແຫຼ່ງຂໍ້ມູນ ແລະ ການແກ້ໄຂຂໍ້ມູນ.
- ກຳນົດເວລາຈັດຝຶກອົບຮົມເປັນປະຈຳ ກ່ຽວກັບຈັນຍາບັນ, ຂອບເຂດດ້ານກົດໝາຍ, ແລະ ການຮັບມືກັບຄວາມສ່ຽງ.
- ແຕ່ງຕັ້ງຫົວໜ້າໜ່ວຍງານຈັນຍາບັນ (ຖ້າເປັນໄປໄດ້) ເພື່ອຄຸ້ມຄອງການປະຕິບັດຕາມກົດລະບຽບ, ຕອບຄຳຖາມ ແລະ ໄກ່ເກ່ຍຂໍ້ຂັດແຍ້ງ.

## 5.2. ຕົວຢ່າງການໄກ່ເກ່ຍຂໍ້ຂັດແຍ້ງ

ຫາກເກີດບັນຫາຮ້າຍແຮງກ່ຽວກັບການບໍ່ປະຕິບັດຕາມຫຼັກຈັນຍາບັນ:

1. ນັກຂ່າວທີ່ກ່ຽວຂ້ອງຈະຕ້ອງລາຍງານບັນຫາດັ່ງກ່າວເປັນການສ່ວນຕົວ ຕໍ່ບັນນາທິການ ຫຼື ຫົວໜ້າໜ່ວຍງານຈັນຍາບັນ.

2. ບັນນາທິການ ແລະ ຫົວໜ້າໜ່ວຍງານຈັນຍາບັນ ຈະຈັດກອງປະຊຸມເພື່ອຊີ້ແຈງຂໍ້ຄວາມຈິງ ແລະ ສາເຫດແຮງຈູງໃຈ.

3. ຄວນຮອບຮວມຄຳຄິດເຫັນເພີ່ມຕື່ມ, ຖ້າຈຳເປັນ.

4. ຫົວໜ້າໜ່ວຍງານຈັນຍາບັນ ຕ້ອງນຳສະເໜີວິທີການແກ້ໄຂບັນຫາ ຄື: ການແກ້ໄຂບັນຫາ, ການອະທິບາຍຊີ້ແຈງ, ຫຼື ແຈ້ງການຕໍ່ສາທາລະນະຊົນ.

5. ດຳເນີນການໃນທັນທີ; ບັນທຶກວິທີການແກ້ໄຂ ແລະ ແຈ້ງໃຫ້ພະນັກງານຊາບ.

# VI. ເຄື່ອງມື ແລະ ຄຳແນະນຳ

## 6.1. ແຜນຜັງຄວາມຄິດ

ນຳໃຊ້ເຄື່ອງມືປະກອບພາບເພື່ອສະຫຼຸບກ່ຽວກັບປະເດັນຕໍ່ໄປນີ້: **"ຄວນລະບຸແຫຼ່ງຂໍ້ມູນຂອງຕົນ ຫຼື ບໍ່?"**→ ຄວາມສ່ຽງ? ອັນຕະລາຍ? ຜົນປະໂຫຍດຕໍ່ສາທາລະນະຊົນ? ກົດໝາຍ? ແມ່ນ→ພິຈາລະນາບໍ່ເປີດເຜີຍຕົວຕົນ ແລະ ໄດ້ຮັບຄວາມຍິນຍອມ.

## 6.2. ຕົວຢ່າງຕົ້ນແບບ

• ຄຳຂໍຕອບກັບ: "ພວກເຮົາໄດ້ຮັບອີເມວຂອງທ່ານກ່ຽວກັບ X ແລ້ວ. ພວກເຮົາກຳລັງລວມຂໍ້ຄວາມນັ້ນໄວ້ນຳກັນ, ແຕ່ຕ້ອງການຢືນຢັນ ຫຼື ຂໍລາຍລະອຽດເພີ່ມຕື່ມ..."

• ແຈ້ງການແກ້ໄຂ: "ໃນວັນທີ [ວັນທີ], ພວກຂ້າພະເຈົ້າໄດ້ລາຍງານຂ່າວກ່ຽວກັບ X. ເຊິ່ງຂ່າວກ່ອນໜ້ານີ້ທີມງານຂອງພວກເຮົາລະບຸເປັນ Y, ແຕ່ພາຍຫຼັງພວກເຮົາໄດ້ຮູ້ວ່າເປັນ Z. ພວກຂ້າພະເຈົ້າຂໍອະໄພ ແລະ ໄດ້ດັດແກ້ບົດຄວາມໃໝ່ແລ້ວ."

## 6.3. ຄຳຖາມສຳຄັນສຳລັບຄິດທົບທວນ

• ແມ່ນຫຍັງທີ່ເຮັດໃຫ້ເຮົາບໍ່ສະບາຍໃຈ ຖ້າຫາກຂະບວນການລາຍງານຂ່າວນີ້ຖືກເປີດເຜີຍ?
• ເນື້ອໃນຂອງບົດຂ່າວອາດເຮັດໃຫ້ບຸກຄົນທີ່ກ່ຽວຂ້ອງຕົກຢູ່ໃນຄວາມສ່ຽງ ຫຼື ບໍ່?
• ບັນທັດຖານທາງກົດໝາຍ ຫຼື ວັດທະນະທຳໃດແດ່ທີ່ມີຜົນບັງຄັບໃຊ້?
• ພວກເຮົາມີຄວາມເປັນກາງ ຫຼື ຮອບຄອບ ຫຼື ບໍ່?

### 1. ເຫດຜົນທີ່ຈັນຍາບັນມີຄວາມສຳຄັນ

ໃນປະເທດລາວ, ເຊັ່ນດຽວກັບຫຼາຍໆປະເທດ, ສື່ມວນຊົນກຳລັງປະເຊີນໜ້າກັບບັນຫາທ້າທາຍ 3 ດ້ານ ໄດ້ແກ່:

• ຄວາມເຊື່ອໝັ້ນຫຼຸດລົງ, ຜູ້ຊົມເກີດຄວາມສົງໄສຫຼາຍຂຶ້ນທັງສື່ຂອງລັດ ແລະ ສື່ອິດສະຫຼະ ເຊິ່ງມັກຈະຫັນໄປຕິດຕາມໂພສໃນສື່ສັງຄົມອອນລາຍທີ່ບໍ່ໄດ້ຮັບການຢືນຢັນຄວາມຖືກຕ້ອງ.
• ຄວາມຜິດປົກກະຕິຂອງຂໍ້ມູນ, ຂ່າວລື, ພາບປະກອບທີ່ຖືກແຕ່ງເຕີມ ແລະ ເນື້ອໃນດ້ານດຽວທາງອອນລາຍເຮັດໃຫ້ເລື່ອງຈິງກັບເລື່ອງແຕ່ງເກືອບກາຍເປັນເລື່ອງດຽວກັນ.
• ແຮງກົດດັນທາງດ້ານເສດຖະກິດ, ກອງບັນນາທິການຂ່າວຂະໜາດນ້ອຍ ອາດປະເຊີນກັບຂໍ້ຂັດແຍ້ງ

ແຍ່ງລະຫວ່າງຄວາມເປັນອິດສະຫຼະຂອງບັນນາທິການ ກັບອິດທິພົນຂອງຜູ້ລົງໂຄສະນາ ຫຼື ອິດທິພົນທາງການເມືອງ.

ທ່າມກາງສະພາບແວດລ້ອມດັ່ງກ່າວ, **ຄວາມໜ້າເຊື່ອຖືກໍໄດ້ກາຍເປັນເຄື່ອງມືແຫ່ງການເອົາຕົວລອດ.** ການຍຶດໝັ້ນໃນຈັນຍາບັນທີ່ເຂັ້ມແຂງ ບໍ່ພຽງແຕ່ຊ່ວຍປົກປ້ອງສາທາລະນະຊົນເທົ່ານັ້ນ;ແຕ່ຍັງລວມເຖິງກຽດຊື່ສຽງ ແລະ ຄວາມຍືນຍົງຂອງກອງບັນນາທິການຂ່າວໃນໄລຍະຍາວນຳອີກ.

## 2. ແຫຼ່ງຂໍ້ມູນສຳຄັນກ່ຽວກັບຈັນຍາບັນ

ແຫຼ່ງຂໍ້ມູນສຳຄັນກ່ຽວກັບຈັນຍາບັນເຫຼົ່ານີ້ ສາມາດນຳມາປັບໃຊ້ໃຫ້ເຂົ້າກັບສະພາບການຂອງລາວ ຫຼື ນຳໃຊ້ໂດຍກົງໄດ້:

- **ຈັນຍາບັນວິຊາຊີບຂອງ SPJ** (ສະມາຄົມນັກຂ່າວວິຊາຊີບ), ສາມາດປະຕິບັດຕົວຈິງໃນຊີວິດປະຈຳວັນໄດ້ແບບຮອບດ້ານ.
- **ກົດບັດຈັນຍາບັນສາກົນຂອງ IFJ** (ສະຫະພັນນັກຂ່າວສາກົນ), ສຸມໃສ່ການປະຕິບັດສິດແຮງງານ ແລະ ຄວາມປອດໄພຂອງນັກຂ່າວ.
- **ຫຼັກສູດຕົວແບບດ້ານສື່ສານມວນຊົນ ຂອງອົງການ UNESCO**, ກວມເອົາປະເດັນກ່ຽວກັບເສລີພາບຂອງສື່, ຂໍ້ມູນບິດເບືອນ, ແລະ ຈັນຍາບັນສາກົນ.
- **ຄູ່ມືສື່ສານມວນຊົນຂອງ ຣອຍເຕີ**, ກຳນົດກົດລະບຽບທີ່ຊັດເຈນ ກ່ຽວກັບຄວາມເປັນກາງ, ແຫຼ່ງຂໍ້ມູນ ແລະ ຄວາມຖືກຕ້ອງ.

**ຄວນໃຊ້ຫຼັກຈັນຍາບັນເຫຼົ່ານີ້ເມື່ອໃດ:**

- **ການວາງແຜນລາຍງານຂ່າວ**, ຄຳນຶງໃສ່ບັນຫາດ້ານຈັນຍາບັນກ່ອນສົ່ງນັກຂ່າວລົງພື້ນທີ່ເກັບຂໍ້ມູນ.
- **ການລາຍງານຂ່າວສົດ**, ຄວນຕັດສິນໃຈແບບວ່ອງໄວວ່າຂໍ້ມູນທີ່ລະອຽດອ່ອນໃນການເຜີຍແຜ່ຂ່າວອາດເປັນອັນຕະລາຍຕໍ່ຜູ້ຄົນ ຫຼື ບໍ່.
- **ການກວດແກ້**, ຄວນປະຕິບັດຕາມມາດຕະຖານຄວາມເປັນທຳ, ຄວາມເປັນສ່ວນຕົວ ແລະ ການນຳສະເໜີຂ່າວທີ່ສອດຄ່ອງກັນ.

## 3. ຄວາມຮູ້ກ່ຽວກັບຈັນຍາບັນສຳລັບນັກຂ່າວ

- **ກວດສອບຄືນ 2 ຄັ້ງສຳລັບເຜີຍແຜ່ແຕ່ລະຄັ້ງ**, ຄວນກວດສອບຂໍ້ເທັດຈິງຄວາມຈິງຄືນອີກຄັ້ງກ່ອນເຜີຍແຜ່ສູ່ສາທາລະນະຊົນ.
- **ປົກປ້ອງແຫຼ່ງຂໍ້ມູນ**, ໂດຍສະເພາະຊຸມຊົນທີ່ມີຄວາມສ່ຽງ ຫຼື ຜູ້ແຈ້ງແຫຼ່ງຂໍ້ມູນເບາະແສ.
- **ເຄົາລົບຄວາມເປັນສ່ວນຕົວ**, ຫ້າມເຜີຍແຜ່ລາຍລະອຽດທີ່ສາມາດລະບຸຕົວຕົນໄດ້, ຍົກເວັ້ນຜົນປະໂຫຍດຕໍ່ສາທາລະນະຊົນຈະມີນໍ້າໜັກກວ່າຜົນເສຍຫາຍທີ່ຈະຕາມມາ.
- **ຫຼີກລ່ຽງຫຼີກເວັ້ນຂໍ້ຂັດແຍ່ງຂັດແຍ້ງທາງຜົນປະໂຫຍດ**, ຄວນເປີດເຜີຍຂໍ້ມູນຢ່າງໂປ່ງໃສ ຫາກທ່ານມີຄວາມສຳພັນທີ່ກ່ຽວຂ້ອງສ່ວນຕົວກັບບຸກຄົນ ຫຼື ເຫດການໃນຂ່າວນັ້ນ.
- **ບໍລິບົດແມ່ນສິ່ງສຳຄັນ**, ຄວນນຳສະເໜີຮູບພາບ, ຄຳເວົ້າ ແລະ ຂໍ້ມູນທີ່ຖືກຕ້ອງ, ບໍ່ຄວນເສີມແຕ່ງເກີນຄວາມເປັນຈິງເພື່ອຮຽກຮ້ອງຄວາມສົນໃຈ.

▸ **ສຳລັບບັນນາທິການ:**

- **ເປັນແບບຢ່າງທີ່ດີ**, ໂດຍໃຊ້ມາດຕະການກວດສອບແບບດຽວກັນກັບການຕັດສິນໃຈຂອງຕົນເອງ.
- **ຢືດໝັ້ນໃນຄວາມເປັນທຳ**, ບໍ່ຄວນປ່ອຍໃຫ້ແຮງກົດດັນຈາກຜູ້ລົງໂຄສະນາ ຫຼື ການເມືອງມາກຳນົດທິດທາງໃນການລາຍງານຂ່າວ.
- **ປົກປ້ອງຄວາມປອດໄພຂອງນັກຂ່າວ**, ຄຳນຶງໃສ່ໜ້າວຽກທີ່ສ່ຽງຕໍ່ອັນຕະລາຍຢ່າງມີຈັນຍາບັນ.
- **ແກ້ໄຂໃຫ້ມີຄວາມຊັດເຈນ ແລະ ເປັນຄວາມຈິງ**, ຄວນກວດສອບເພື່ອຮັບປະກັນວ່າ ການຕັ້ງຫົວຂໍ້ຂ່າວ, ພາບປະກອບ, ແລະ ເນື້ອໃນທີ່ໂພສໃນສື່ສັງຄົມອອນລາຍມີຄວາມສອດຄ່ອງກັບຄວາມຈິງ.
- **ປ້ອງກັນການບິດເບືອນ**, ຄວນລະວັງແຫຼ່ງຂ່າວທີ່ບໍ່ສົມດຸນ ຫຼື ສຽງທີ່ບໍ່ໄດ້ຮັບການນຳສະເໜີ.

## 4. ບົດຝຶກຫັດສຳລັບທີມງານ

- **ການອະພິປາຍກໍລະນີສຶກສາ**, ນຳສະເໜີກ່ຽວກັບບັນຫາທີ່ເກີດຂຶ້ນຕົວຈິງໃນລາວ (ເຊັ່ນ ການລະບຸຊື່ຜູ້ປະສົບອຸບັດເຫດ, ການລາຍງານຂ່າວປະທ້ວງ). ແບ່ງທີມອອກເປັນກຸ່ມ ຄື "ກຸ່ມເຜີຍແຜ່" ກັບ "ກຸ່ມໂຈະການເຜີຍແຜ່", ຈາກນັ້ນຈຶ່ງເລີ່ມດຳເນີນການປຶກສາຫາລື.
- **ລະບຸຄວາມສ່ຽງດ້ານຈັນຍາບັນ**, ກວດສອບໂພສໃນສື່ສັງຄົມອອນລາຍໄລຍະຜ່ານມາ, ແລະ ກຳນົດການລະເມີດຈັນຍາບັນທີ່ອາດເກີດຂຶ້ນ.
- **ສ້າງແຜນຜັງຈັນຍາບັນ,** ຈົດບັນທຶກປະເດັນທີ່ມັກພົບທີ່ສຸດທີ່ທີມຂອງທ່ານປະເຊີນ. ເຊື່ອມໂຍງແຕ່ລະປະເດັນເຂົ້າກັບນະໂຍບາຍ ຫຼື ວິທີການປະຕິບັດທີ່ດີທີ່ສຸດ.

## 5. ການສ້າງຫຼັກຈັນຍາບັນສຳລັບກອງບັນນາທິການ

### ຂັ້ນຕອນທີ 1: ເລີ່ມຕົ້ນຈາກການສົນທະນາ

- **ສື່ສານມວນຊົນທີ່ມີຄວາມຮັບຜິດຊອບ ມີຄວາມໝາຍຕໍ່ພວກເຮົາແນວໃດ?"**
- ໃຊ້ເຈ້ຍໂນດ ຫຼື ກະດານຂາວ ເພື່ອຮວບຮວມຄ່ານິຍົມ ແລະຂໍ້ຂ້ອງໃຈ.

### ຂັ້ນຕອນທີ 2: ຮ່າງຫຼັກການສຳຄັນ

- ປັບໃຊ້ແນວທາງຈັນຍາບັນຂອງ SPJ, IFJ, ຫຼື ຣອຍເຕີ, ແຕ່ໃຫ້ສອດຄ່ອງກັບສະພາບການຕົວຈິງທາງດ້ານກົດໝາຍ ແລະ ວັດທະນະທຳຂອງລາວ. ຂັ້ນຕອນທີ 2: ຮ່າງຫຼັກການສຳຄັນ

### ຂັ້ນຕອນທີ 3: ກຳນົດຫຼັກການປະຕິບັດ

- ວິທີການຮັບມືກັບແຫຼ່ງຂ່າວທີ່ບໍ່ເປີດເຜີຍຕົວຕົນ.
- ມາດຕະຖານການປະຕິບັດສຳລັບການແກ້ໄຂ ແລະ ຊີ້ແຈງ.
- ກົດລະບຽບການນຳໃຊ້ເນື້ອໃນສຳລັບສື່ສັງຄົມອອນລາຍ.

### ຂັ້ນຕອນທີ 4: ກຳນົດຄວາມຮັບຜິດຊອບ

- ຕັດສິນໃຈວ່າແມ່ນໃຜຄວນເປັນຜູ້ອະນຸມັດຂ່າວທີ່ມີຄວາມສ່ຽງສູງ.
- ກຳນົດຂະບວນການກວດສອບແບບເລັ່ງດ່ວນສຳລັບຂ່າວເດັ່ນ.

### ຂັ້ນຕອນທີ 5: ໝັ້ນກວດສອບເປັນປະຈຳ

- ປັບປຸງຄູ່ມືຈັນຍາບັນຢ່າງໜ້ອຍ 1 ຄັ້ງຕໍ່ປີ ຫຼື ຫຼັງຈາກເກີດ
ເຫດການສຳຄັນ.

**ການປະຕິບັດຈັນຍາບັນປະຈຳວັນ**

ການລາຍງານຂ່າວຢ່າງມີຈັນຍາບັນບໍ່ແມ່ນທາງເລືອກ ແຕ່ເປັນສິ່ງຈຳເປັນຕໍ່ຄວາມໜ້າເຊື່ອຖືຂອງສື່ມວນຊົນ! ບໍ່ວ່າຈະເປັນການລາຍງານຂ່າວລະດັບຊຸມຊົນ, ນະໂຍບາຍລະດັບຊາດ ຫຼື ບັນຫາສັງຄົມ... ທຸກເລື່ອງລາວລ້ວນແຕ່ມີຜົນຕໍ່ການເສີມສ້າງ ຫຼື ທຳລາຍຄວາມເຊື່ອໝັ້ນຂອງປະຊາຊົນໄດ້. ນັກຂ່າວລາວຈຶ່ງຈຳເປັນຕ້ອງໄດ້ຍຶດໝັ້ນໃນຫຼັກຈັນຍາບັນ ເພື່ອໃຊ້ເປັນແນວທາງໃນການປະຕິບັດໜ້າທີ່ ເພື່ອກ້າວຜ່ານຄວາມສັບຊ້ອນ, ການຂາດຂໍ້ມູນ, ຂໍ້ຈຳກັດດ້ານການເມືອງ ແລະ ຄວາມລະອຽດອ່ອນທາງວັດທະນະທຳ.

ຄູ່ມືເຫຼັ້ມນີ້ ບໍ່ແມ່ນຫຼັກສູດຕາຍຕົວ. ແຕ່ເປັນຊຸດເຄື່ອງມື, ຂັ້ນຕອນ, ຄຳຖາມ ແລະ ຂະບວນການ. ຄຸນຄ່າຂອງຄູ່ມືເຫຼັ້ມນີ້ ແມ່ນຂຶ້ນກັບການນຳໃຊ້ຫຼັກການທີ່ກຳນົດໃນຄູ່ມືຢ່າງສະໝ່ຳສະເໝີ. ເມື່ອເວລາຜ່ານໄປ, ຜົນຂອງການສະສົມຈະກໍ່ໃຫ້ເກີດເປັນວັດທະນະທຳການສື່ສານມວນຊົນທີ່ຝັງແໜ້ນ**ໃນຄວາມຖືກຕ້ອງ, ຄວາມເປັນທຳ, ຄວາມໂປ່ງໃສ, ຄວາມເຄົາລົບ ແລະ ການຮັບໃຊ້ສັງຄົມ.**

ຄູ່ມືເຫຼັ້ມນີ້ອາດມີການກວດສອບ ແລະ ດັດແກ້ເປັນແຕ່ລະໄລຍະ.

ດ້ວຍວິວັດທະນາການທີ່ຂະຫຍາຍຕົວຢ່າງວ່ອງໄວທາງອິນເຕີເນັດ, ແຜລດຟອມສື່ສັງຄົມອອນລາຍ, ແລະ ການປ່ຽນແປງທາງການເມືອງໃນລະດັບພາກພື້ນ, ການລາຍງານຂ່າວຢ່າງສະໝ່ຳສະເໝີ ຈະຊ່ວຍໃຫ້ສາມາດຮັບປະກັນໄດ້ວ່າ ແນວທາງແນະນຳຍັງຄົງມີຄວາມກ່ຽວຂ້ອງ ແລະ ມີປະສິດທິພາບ.

In collaboration with

Lao Journalists Association

RDK GROUP

laopost

The Laotian Times

Supported by

Funded by the European Union

Internews
Local voices. Global change.

# Table of contents

Introduction 24

I. Introduction: Earning Trust Through Honest Reporting 25

II. The Lao Media Context 26

III. Core Ethical Principles 29

IV. Ethical Decision-Making in Practice 32

Lao Journalism Ethics Case Study Bank 33

V. Strengthening Newsroom Ethics Culture 36

VI. Tools & Tips 37

# Introduction
## Trust

If you're wondering why this manual exists, the answer is simple: trust.

The media only works the way it should when people, both in the public and private sectors, trust it. So how do you earn that trust?

That's what we're here to figure out.

This manual provides practical guidance for media professionals across industries in Laos.

It outlines key procedures, tools, and considerations for navigating today's evolving media landscape responsibly and ethically.

It is intended to support accuracy, safety, and contextual awareness in media production and reporting in Laos.

# I. Introduction: Earning Trust Through Honest Reporting

Trust is the foundation of any credible media. Without it, the power of journalism to inform, question, and change society vanishes. Even in the Lao context, where most outlets are state-owned, ethics must not be optional.

Every time you publish, you make a choice:

- Do readers believe your reporting?

- Do the public and private sectors respect you?

- Does your work serve the public interest?

That choice matters. This manual equips journalists in Laos with clear, actionable guidance, on accuracy, transparency, fairness, source protection, and professionalism, to earn and sustain trust with every story.

In Laos, the media landscape is shaped by a mix of state-owned outlets, emerging private players, and a fast-moving online environment where news and rumors often travel side by side.

Social media platforms have opened space for more voices, but they have also made it easier for unverified information, clickbait, and disinformation to spread before facts are confirmed.

The result? A growing skepticism.

Audiences are questioning not only what they read, but why they should believe it. Even reliable outlets risk being judged by the lowest common denominator in the information ecosystem.

- **Tight regulatory frameworks** mean journalists often have to navigate reporting within clearly defined limits, while still aiming for fairness and accuracy.

- **Limited access to timely official information** can push some outlets toward speculation or over-reliance on social media sources.

- **Economic pressures** make media organizations more vulnerable to sponsored content and advertiser influence, which can blur editorial lines.

**What this manual will help you do:**

- Recognize ethical risks before they damage your credibility.
- Handle information from digital and offline sources with rigor.
- Respond to breaking news without compromising accuracy.
- Protect yourself and your colleagues in challenging reporting environments.
- Build transparency into your newsroom culture so audiences can see how you work, not just what you publish.

Trust isn't built in a single headline, it's earned with every decision, every fact check, every conversation with a source, and every correction when mistakes happen.

# II. The Lao Media Context

## 2.1 Media Ownership & Freedom

In Laos, nearly all media are state-owned and all media activities must work in line with the national legislation.

The Ethical Journalism section of the Lao Media Law states:
"The highest principle of Lao media is to serve the mission of building and protecting the nation, ensuring peace, independence, democracy, unity, and prosperity under the leadership of the Lao People's Revolutionary Party. Regardless of the field or environment, journalists must work toward this ultimate goal."

As of mid-2025, Laos has no official media ethics committee.

Globally, Laos ranks 150 out of 180 in the 2025 Press Freedom Index, an improvement of three spots from the previous year. Local press has seen gradual increases in editorial flexibility and openness.

According to the law, “the media serves as a platform for citizens’ right to information. Journalists must be objective, honest (loyal to the Party), and respectful of the truth.”

## 2.2 Public Hesitancy

A key challenge remains: many people are hesitant to speak with journalists, not just on sensitive topics, but also everyday subjects like education, tourism, or food.

This reluctance makes it harder to gather accurate information and meet international standards of ethical journalism.

Building a strong and credible media sector requires transparency, accountability, and public trust.

This can only be achieved through collaboration among journalists, NGOs, schools, and government institutions.

Together, they can foster a media environment that supports the public good and national development.

## 2.3 A Changing Landscape

Despite constraints, the Lao media environment is evolving . Some outlets are pushing the boundaries of editorial space, covering social issues, local events, or human-interest stories more openly.

There’s cautious optimism that with robust ethical practices, journalism can play a more influential role in community dialogue and national discourse.

The Lao media environment is gradually evolving, largely driven by changing news consumption habits.

Facebook has become the main source of information, with most official announcements, government updates, and public notices shared directly on the platform.

Meanwhile, TikTok is rapidly gaining popularity, capturing a growing share of social media traffic and influencing how younger audiences consume news.

This shift provides more options for engaging readers, including multimedia storytelling, short-form videos, and interactive posts.

News organizations in Laos are beginning to experiment with these formats, recognizing that audiences now expect timely, accessible, and interactive news beyond traditional print or broadcast channels.

## 2.4 Legal Overview

Lao laws regulate media operations tightly. Journalists must navigate legal frameworks carefully, balancing the obligation to inform with the need to avoid defamation, prohibited content, or disinformation.

This manual does not replace legal advice but supports journalists in ethical decision-making within the boundaries of the law.



# III. Core Ethical Principles

## 3.1 Accuracy

Accuracy isn't optional! it's the bedrock of credibility.

• **Verify:** Every fact, names, dates, data, quotes, should be checked with multiple sources wherever possible.

• **Fact-check Rigorously:** Even trusted sources can err. Use documents, public records, direct communications, and official statements to verify facts.

• **Own your mistakes:** Mistakes happen. When they do, acknowledge them honestly and make corrections in a timely and visible way.

• **Don't Rush:** Don't rush to publish reports based on assumptions or unverified tips. Let the story breathe until facts are confirmed.

• **Explain Uncertainty:** If complete verification isn't possible, acknowledge it. Phrases like "reported to be" or "according to the available data" build reader trust.

## 3.2 Fairness & Transparency

Fair treatment and honesty build respect, for both your sources and your readers.

• **No Deception:** Don't lie, mislead, or fabricate identities to gain access. Exceptions are rare and must be approved by senior staff.

• **No Pressure:** Avoid coercion, don't promise coverage or threaten withdrawal. Let people speak (or decline) freely.

• **Clear Identity:** Always identify yourself as a journalist when interviewing or gathering information. Only skip disclosure in extraordinary cases, and only with permission.

• **Responsible Public Observation:** Cover events in public spaces fairly. Don't mislead by disguising motives or roles.

• **Exceptions for Hidden Reporting:** In rare cases, like undercover work, deceit may be justified. Always seek and document editorial approval.

## 3.3 Balance & Right to Respond

Justice in reporting demands giving people a chance to be heard.

• **Right to Respond:** If reporting criticism, allegations, or negative implications about someone, offer them a fair opportunity to respond.

• **Inviting Meaningful Replies:** Provide enough context and detail so sources can give substantive replies, not generic denials.

• **Include All Perspectives:** Strive for an unbiased view: sources, witnesses, experts, official data, and dissenting voices.

• **Proceed Even Without Responses:** If someone declines comment, continue reporting fairly. Explain that they were approached but didn't reply.

## 3.4 Attribution & Originality

Proper crediting builds credibility, and helps avoid ethical pitfalls.

• **Acknowledge Others:** Cite publications, researchers, or journalists when referencing their work.

E.g. "As reported by Vientiane Times on ..."

• **Label Unverified Claims:** If sharing secondhand information, make the source clear.

• **Maintain Attribution for Scoops:** Even after verifying major developments, credit outlets that broke the story first.

• **Avoid Plagiarism:** Never copy, always paraphrase and attribute. Use quotes sparingly and clearly.

• **Archive Reuse with Care:** Reuse past content only when necessary. Rewrite and update to stay current.

## 3.5 Clear Sourcing & Record-Keeping

Readers deserve to know where information came from, and you need documentation for safety and accountability.

- **Contextualize Source Types:** Mention whether information came from a live interview, phone call, email, official statement, or document.

- **Maintain Records:** Keep detailed notes, timestamps, consent, original audio/transcripts, in secure archives.

- **Transparency About Limitations:** If a source requested anonymity, note that for readers: e.g., "a senior ministry official, speaking on condition of anonymity..."

- **Be Prepared for Scrutiny:** If your work is challenged, or you face legal pressure, accurate records are your strongest defense.

## 3.6 Protecting Source Identities

In Laos, protecting sources is both ethical and critical, given the specific social and political context.

- **Anonymity for Safety:** Grant it only when revealing identity could cause harm.

- **Informed Consent:** Explain risks and get permission before granting anonymity.

- **Secure Handling:** Keep audio, documents, and source details encrypted and access-restricted.

- **Evaluate Risk:**

  - Is the information politically sensitive?
  - Could certain individuals or communities face backlash?
  - Is publication in the public interest?

# IV. Ethical Decision-Making in Practice

## 4.1 Daily Reporting Checklist

Before you hit "publish," ask:

1. Have I checked key facts with multiple sources?
2. Did I give relevant parties a chance to respond?
3. Did anyone request anonymity or privacy, and did I handle that properly?
4. Am I transparent about how information was obtained?
5. Have I credited other sources and outlets?
6. Is there any bias or conflict I should disclose?
7. Does this story serve the public interest?

If the answer to any of these is no, stop and reassess.

## 4.2 Handling Political Pressure

Powerful figures may try to influence reporting. Virtually state-owned media sometimes face internal editorial constraints.

- **Stay Firm on Facts:** Don't let pressure shape the story. If errors are made, correct them.

- **Seek Editorial Support:** If pressured, involve a senior editor. If a story is blocked, the team should evaluate the situation with caution.

- **Transparent Disclaimers:** If you couldn't get a response from someone in power, say so. It is due process.

- **When to Decline:** If faced with demands to censor or punish journalists, seriously consider not running the piece. Doing so transparently is often better than publishing under duress.

## 4.3 Handling Sensitive Topics

Journalists may need to cover topics around religion, ethnicity, gender, internal politics, or regional issues.

- **Cultural Sensitivity:** Consult with local experts to avoid misuse of sacred or sensitive symbols.

- **Privacy and Dignity:** Don't show graphic images of conflict, children, or distressed people unless essential and contextualized.

- **Consult Experts:** Use human rights, religious leaders, or anthropologists to provide balanced explanations.

- **Avoid Defamation:** In legal grey areas, back allegations with documents, or avoid publishing until verified.

## 4.4 Engaging Your Readers

Don't treat readers as passive. Invite transparency:

- **Corrections Policy:** Let readers know how you handle errors.

- **Public Ongoing Dialogue:** Use your platform, online or offline, to answer questions or host discussions about journalistic methods, challenges, and decisions.

# Lao Journalism Ethics Case Study Bank

## 1. Accident Victim Naming

### Scenario:

A minibus crash in Bolikhamxay leaves multiple people injured. You have names from a police source and a relative who posted publicly on Facebook. Some victims are minors.

**Ethical Dilemma:**
Do you publish names and photos immediately, or wait for official confirmation?

**Considerations:**

- Privacy vs. public interest
- Risk of misinformation if early reports are wrong
- Cultural norms around publicizing personal tragedy

**Discussion Questions:**

- When does public interest outweigh the family's right to privacy?
- If one family shares the name publicly, does that make it ethical to publish?

## 2. Corruption Allegations from Anonymous Source

### Scenario:

An anonymous whistleblower sends you documents claiming mismanagement of funds in a district project. They refuse to reveal their identity, fearing retaliation.

**Ethical Dilemma:**
Do you run the story using anonymous sourcing, or hold until you can verify independently?

**Considerations:**

- Source protection vs. risk of being manipulated
- Need for documentary proof and cross-checking
- Potential harm to accused individuals if unverified

**Discussion Questions:**

- How many sources or documents are enough before publishing?
- What if the documents cannot be fully verified but public interest is high?

## 3. Historic Photo of a Militant Group

### Scenario:

You're reporting on a 20-year-old conflict in Laos and use an archival photo of an armed group. Facebook removes the post for "promoting dangerous organizations."

**Ethical Dilemma:**
Do you blur the image, replace it, or appeal the takedown?

**Considerations:**
- Need for historical accuracy
- Avoiding unintended promotion of violence
- Adhering to platform rules without distorting history

**Discussion Questions:**
- How can you preserve context while meeting social media policies?
- Should the same rules apply to historic vs. current militant groups?

# 4. Flood Evacuation Rumors

## Scenario:

During heavy rains, local residents report on Facebook that a dam in Xayaburi has cracked and is about to burst. Officials deny it, but your stringer sees soldiers moving equipment toward the dam.

**Ethical Dilemma:**
Do you publish a "possible emergency" story or wait for confirmation?

**Considerations:**
- Avoiding panic vs. alerting the public to potential danger
- Verifying with multiple credible sources
- Legal and reputational risk if wrong

**Discussion Questions:**
- What is your threshold for publishing urgent but unconfirmed safety news?
- How can wording reduce panic while still warning the public?

# 5. Sponsored Story Disguised as News

## Scenario:

An advertiser offers to sponsor an article about a new agricultural product but asks not to label it as "advertorial." They are a major funding source for your newsroom.

**Ethical Dilemma:**
Do you run the story without disclosure, or risk losing ad revenue by labeling it sponsored?

**Considerations:**

- Transparency and trust with readers
- Financial survival of the newsroom
- Precedent it sets for future deals

**Discussion Questions:**

- Is audience trust worth more than short-term revenue?
- How should your newsroom standardize labeling for paid content?

# V. Strengthening Newsroom Ethics Culture

## 5.1 Internal Ethics Procedures

- Create written policies on reporting standards and conflicts of interest.
- Standardize due diligence checklists for verification, source-handling, and corrections.
- Schedule regular training on ethics, legal boundaries, and risk handling.
- Designate an **Ethics Lead** (where possible) to oversee compliance, answer questions, and mediate disputes.

## 5.2 Conflict Mediation Example

Should a serious ethical issue arise:

1. The concerned journalist raises the issue privately with the editor or Ethics Lead.

2. They meet to clarify facts and motivations.
3. If needed, gather additional viewpoints.
4. The Ethics Lead proposes a solution: correction, clarification, story adjustment, or public note.
5. Act promptly; document the resolution and communicate it with staff.

# VI. Tools & Tips

## 6.1 Mind Maps

Use visual tools to outline:
**"Should I identify my source?"** → Risk? Harm? Public interest? Legal? Yes → consider anonymity and consent.

## 6.2 Sample Templates

- **Response Request:** "We received your message about X. We're including the statement, but would like to confirm or expand..."

- **Correction Notice:** "On [date], we reported X. We previously stated Y, but later learned Z. We apologize and have updated the article."

## 6.3 Key Questions for Reflection

- What would make me uncomfortable if the process were revealed?
- Could the story put someone at risk?
- What legal or cultural norms apply?
- Have I been objective and thorough?

### 1. Why Ethics Matter Now

In Laos, as in many countries, the media faces a triple challenge:

- **Eroding trust**, Audiences are more skeptical of both state and independent outlets, often turning to unverified social media posts.

- **Information disorder**, The flood of rumors, doctored visuals, and one-sided narratives online blurs fact from fiction.

- **Economic pressure**, Smaller newsrooms may face conflicts between editorial independence and advertiser or political influence.

In this environment, **credibility becomes a survival tool**. Upholding strong ethics protects not just the public, but the newsroom's long-term reputation and viability.

## 2. Core Ethical Resources

These can be adapted for Laos or used directly:

- **SPJ Code of Ethics** (Society of Professional Journalists), Comprehensive, practical for everyday dilemmas.
- **IFJ Global Charter of Ethics** (International Federation of Journalists), Strong on labor rights and journalist safety.
- **UNESCO Model Curricula for Journalism**, Sections on media freedom, misinformation, and global ethics.
- **Reuters Handbook of Journalism**, Clear rules for impartiality, sourcing, and accuracy.

**When to use these:**

- **Story planning**, Anticipate ethical dilemmas before sending reporters into the field.
- **Live coverage**, Decide quickly if publishing sensitive info could harm people.
- **Editing**, Apply consistent standards on fairness, privacy, and representation.

## 3. Ethics Tip sheet

**For Journalists**

- **Verify twice, publish once**, Cross-check facts before going public.
- **Protect sources**, Especially vulnerable communities or whistleblowers.
- **Respect privacy,** Don't publish identifiable details unless public interest outweighs harm.
- **Avoid conflicts of interest,** Disclose if you have a personal connection to the story.

- **Context is key,** Images, quotes, and data should be framed accurately, not sensationalized.

### For Editors

- **Lead by example**, Apply the same scrutiny to your own decisions.
- **Stand firm on fairness,** Don't allow advertiser or political pressure to shape coverage.
- **Protect staff safety**, Make ethical calls about dangerous assignments.
- **Edit for clarity & truth**, Ensure headlines, visuals, and social posts match the facts.
- **Guard against bias**, Watch for imbalanced sourcing or underrepresented voices.

## 4. Team Exercises

- **Case Study Debate**, Present a real Lao news dilemma (e.g., naming accident victims, reporting on protests). Split the team into "publish" vs. "withhold" groups, then discuss.

- **Spot the Ethical Risk**, Review past social media posts and identify potential ethical breaches.

- **Ethics Mapping**, Write down the most common dilemmas your team faces. Link each to a policy or best practice.

## 5. Creating a Newsroom Ethics Rulebook

### Step 1: Start the Conversation

- **"What does responsible journalism mean to us?"**
- Use sticky notes or a whiteboard to collect values and concerns.

### Step 2: Draft Core Principles

- Adapt from SPJ, IFJ, or Reuters guidelines, but make them fit Lao legal and cultural realities.

### Step 3: Define Practical Rules

- How to handle anonymous sources.
- Protocols for corrections and clarifications.
- Rules for using social media content.

### Step 4: Assign Accountability

- Decide who approves high-risk stories.
- Establish a rapid review process for breaking news.

### Step 5: Review Regularly

- Update the ethics guide at least once a year or after a major incident.

## Ethics as Daily Practice

Ethical journalism isn't optional. It's essential! Whether reporting commune news, national policy, or social issues, each story can strengthen, or weaken, the public's trust. Lao journalists must rely on ethics to guide them through complexity, shortages of information, political constraints, and cultural sensitivity.

This manual is not a rulebook etched in stone. Rather, it's a toolkit, a series of steps, questions, and procedures. Its value lies in how consistently you apply these principles.

Over time, the cumulative effect will be a journalism culture rooted in **accuracy, fairness, transparency, respect, and service.**

---

⚠ *This manual is subject to periodic review and revision.*

Given the fast-paced evolution of the internet, social media platforms, and regional political dynamics, regular updates will ensure that the guidance remains relevant and effective.



## Access to online versions:

laopost

https://laopost.com/journalism-media-resources-guidebooks

or

The Laotian Times

https://laotiantimes.com/journalism-media-resources-guidebooks

or

# Contact us

ສະມາຄົມນັກຂ່າວແຫ່ງ ສປປ ລາວ
Lao Journalist association

Vientiane Times Phonpapao Village, Unit 32, Sisattanak District, P.O.Box: 5723 Vientiane, Lao PDR

Tel: (856-21) 336040, 336042
Mobile: (856-20) 54915353
Fax: (856-21) 336041
E-mail: info@laja.la

ອາດີເຄ ກຣຸບ
RDK Group

134 Rue Samsenthai, Xiengyeun village, Chanthabuly District, VTE

Tel: (856-20) 55731717
E-mail: info@rdkgroup.la